ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 0010/ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 15 MAR 2021

# ແຈ້ງການ

ເຖິງ: ຕະຫຼາດຫຼັກຊັບລາວ, ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ເລື່ອງ: ການປ່ຽນແປງມູນຄ່າກຳນົດຂອງຮຸ້ນບໍລິສັດຈົດທະບຽນ.

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 03 ທັນວາ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຂໍແຈ້ງມາຍັງທ່ານຊາບວ່າ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ສາມາດປ່ຽນແປງມູນຄ່າກຳນົດຂອງຮຸ້ນບໍລິສັດຈົດທະບຽນ ໄດ້ໂດຍໃຫ້ປະຕິບັດ ດັ່ງນີ້:

1. ການປ່ຽນແປງມູນຄ່າກຳນົດຂອງຮຸ້ນ ສາມາດປະຕິບັດໄດ້ດ້ວຍການ ແຕກຮຸ້ນ ຫຼື ໂຮມຮຸ້ນ;
2. ມູນຄ່າກຳນົດຂອງຮຸ້ນພາຍຫຼັງການ ແຕກຮຸ້ນ ຫຼື ໂຮມຮຸ້ນ ຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດໄວ້;
3. ບໍລິສັດຈົດທະບຽນ ຕ້ອງສະເໜີການປ່ຽນແປງມູນຄ່າກຳນົດຮຸ້ນຂອງບໍລິສັດ ໃຫ້ກອງປະຊຸມສະພາບໍລິຫານພິຈາລະນາອະນຸມັດ ກ່ອນສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ ພ້ອມທັງເປີດເຜີຍມະຕິກອງປະຊຸມສະພາບໍລິຫານ ແລະ ມະຕິກອງປະຊຸມຜູ້ຖືຮຸ້ນ ດັ່ງກ່າວໃຫ້ແກ່ມວນຊົນຊາບ ພາຍໃນເວລາ 24 ຊົ່ວໂມງ ໃນວັນລັດຖະການ ຫຼັງກອງປະຊຸມປິດລົງ;
4. ການປ່ຽນແປງມູນຄ່າກຳນົດຮຸ້ນຂອງບໍລິສັດ ຊຶ່ງຕ້ອງໄດ້ຮັບມະຕິເຫັນດີດ້ວຍຄະແນນສຽງຂອງ ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າຜູ້ຖືຮຸ້ນ ຢ່າງໜ້ອຍ ສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມປະຊຸມ ແລະ ມີຢ່າງໜ້ອຍ ແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດເຂົ້າຮ່ວມ;
5. ບໍລິສັດຈົດທະບຽນ ຕ້ອງປ່ຽນແປງມູນຄ່າກຳນົດຂອງຮຸ້ນ ທີ່ລະບຸໃນກົດລະບຽບຂອງບໍລິສັດ ແລະ ຂຶ້ນທະບຽນເອກະສານທີ່ກ່ຽວຂ້ອງ ຕໍ່ກັບເຈົ້າໜ້າທີ່ທະບຽນວິສາຫະກິດ;
6. ພາຍຫຼັງທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ສຳເລັດການຂຶ້ນທະບຽນເອກະສານທີ່ກ່ຽວຂ້ອງແລ້ວ ບໍລິສັດຈົດທະບຽນ ຕ້ອງເປີດເຜີຍຂໍ້ມູນ ກ່ຽວກັບການປ່ຽນແປງດັ່ງກ່າວ ໃຫ້ແກ່ມວນຊົນຊາບ ພາຍໃນເວລາ 24 ຊົ່ວໂມງ ໃນວັນລັດຖະການ ພ້ອມທັງສະເໜີຕໍ່ຕະຫຼາດຫຼັກຊັບລາວ ເພື່ອປ້ອນຂໍ້ມູນກ່ຽວກັບການປ່ຽນແປງມູນຄ່າກຳນົດໃໝ່ຂອງຮຸ້ນ ເຂົ້າໃນລະບົບ;

7. ມອບໃຫ້ ຕະຫຼາດຫຼັກຊັບລາວ ເປັນຜູ້ອອກແຈ້ງການເພີ່ມເຕີມ ເພື່ອກຳນົດເນື້ອໃນລະອຽດໃນການຜັນຂະຫຍາຍແຈ້ງການສະບັບນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ຕະຫຼາດຫຼັກຊັບລາວ, ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ແທນ ຫົວໜ້າສຳນັກງານ

ສຽວສະຫວາດ ທິລະກຸນ